ໃບຮັບເງິນທີ່ຊີ້ແຈງຕົວເອງສຳລັບຜູ້ເຂົ້າຮ່ວມໂຄງການຄວາມຊ່ວຍເຫຼືອດ້ານອາຫານສຸກເສີນ
(TEFAP) (ປັບປຸງ. 3/26)

**ທ່ານກຳລັງຢັ້ງຢືນດ້ວຍຄຳເວົ້າທີ່ວ່າຂໍ້ມູນດັ່ງຕໍ່ໄປນີ້ແມ່ນເປັນຄວາມຈິງ:**

1. **ທ່ານເປັນພົນລະເມືອງຂອງລັດຄອນເນັກຕິຄັດ (Connecticut).**
2. **ທ່ານມີລາຍໄດ້ລວມ (ປະຈຳປີ) ຢູ່ທີ່ລະດັບ ຫຼື ຕໍ່າກວ່າຂີດຈຳກັດ<u>ສຳລັບຈຳນວນຄົນໃນຄົວເຮືອນຂອງທ່ານຂ້າງລຸ່ມນີ້:</u>**

ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນລາຍໄດ້ລວມຕໍ່ປີຂອງຈຳນວນພົນໃນຄອບຄົວຂອງທ່ານ. ຖ້າລາຍໄດ້ໃນຄົວເຮືອນຂອງທ່ານແມ່ນຢູ່ໃນລະດັບ ຫຼື ຕໍ່າກວ່າລາຍໄດ້ທີ່ມີລາຍການສຳລັບຈຳນວນພົນໃນຄົວເຮືອນຂອງທ່ານ, ທ່ານມີສິດທີ່ຈະໄດ້ຮັບສິນຄ້າ TEFAP.

| ຄົວເຮືອນ ຂະໜາດ | 1 | 2 | 3 | 4 | 5 | 6 | 7 | 8* |
|---|---|---|---|---|---|---|---|---|
| ປະຈຳປີ ລາຍໄດ້ | $47,880 | $64,920 | $81,960 | $99,000 | $116,040 | $133,080 | $150,120 | $167,160 |

- ສຳລັບແຕ່ລະຄົນທີ່ເພີ່ມຂຶ້ນແມ່ ນໃຫ້ໃສ່ $17,040

ຄູ່ມືຂອງລາຍໄດ້ສະທ້ອນໃຫ້ເຫັນ 300% ຂອງຂີດຈຳກັດຂອງຄວາມທຸ ກຍາກຂອງລັດຖະບານກາງ, ປັບປຸງຄັ້ງລ້າສຸດ 3/1/2026

**ທ່ານຍັງຄົງມີສິດໄດ້ຮັບສິນຄ້າ TEFAP ຖ້າຫາກຄົວເຮືອນຂອງທ່ານໄດ້ເຂົ້າຮ່ວມໃນໂຄງການໃດໜຶ່ງດັ່ງຕໍ່ໄປນີ້:** ໂຄງການຊ່ວຍເຫຼືອດ້ານໂພສະນາການເສີມ (**SNAP**), ຜູ້ຍິງ, ເດັກອ່ອນ ແລະ ເດັກນ້ອຍ (**WIC**), ການຊ່ວຍເຫຼືອຊົ່ວຄາວສຳລັບຄອບຄົວ ທຸກຍາກ (**TANF ຫຼື TFA**), ການຊ່ວຍເຫຼືອດ້ານພະລັງງານ, ສະຫວັດດີການ HUSKY ສຸຂະພາບ/Medicaid, ໂຄງການຊ່ວຍ ເຫຼືອຄ່າເຊົ່າເຮືອນ ພາກທີ 8, ການຊ່ວຍເຫຼືອທົ່ວໄປທີ່ບໍລິຫານໂດຍລັດ (**SAGA**), ແລະ ລາຍໄດ້ປະກັນຄວາມປອດໄພເສີມ (**SSI**).

3. **ທ່ານຈະຕ້ອງລາຍງານການປ່ຽນແປງຕ່າງໆທີ່ເກີດຂຶ້ນຂອງຄົວເຮືອນ ຫຼື ລາຍໄດ້ <u>ໄລຍະຜ່ານມາຈົນເຖິງການຢ້ຽມຢາມ ຄັ້ງຕໍ່.</u>**

ອີງຕາມກົດໝາຍຂອງສິດທິພົນລະເມືອງຂອງລັດຖະບານກາງ ແລະ ສະຫະລັດອາເມລິກາ. ກົດລະບຽບ ແລະ ນະໂຍບາຍດ້ານສິດທິພົນລະເມືອງຂອງພະແນກກະສິກຳ (USDA), ສະຖາບັນນີ້ຖືກຫ້າມບໍ່ໃຫ້ມີການຈຳແນກບົນພື້ນຖານເຊື້ອຊາດ, ສີຜິວ, ຊາດກຳເນີດ, ເພດ (ລວມທັງ ການລະບຸເພດ ແລະ ລົດສະນິຍົມທາງເພດ), ຄວາມພິການ, ອາຍຸ ຫຼື ການແກ້ແຄ້ນ ຫຼື ການຕອບໂຕ້ສຳລັບກິດຈະກຳດ້ານສິດທິພົນລະເມືອງກ່ອນໜ້າ.

ຂໍ້ມູນຂອງໂຄງການອາດຈະມີກຽມໄວ້ໃຫ້ຂຶ້ນເປັນຫຼາຍພາສານອກຈາກພາສາອັງກິດ. ຄົນພິການທີ່ຂໍວິທີທາງເລືອກຂອງການສື່ສານເພື່ອຮັບຂໍ້ມູນໂຄງການ (ຕົວຢ່າງ: ອັກສອນບົວ (Braille), ສິ່ງພິມຂະໜາດໃຫຍ່, ເທບສຽງ, ພາສາມືອາເມລິກາ), ຄວນຕິດຕໍ່ຫາລັດທີ່ຮັບຜິດຊອບ ຫຼື ໜ່ວຍງານທ້ອງຖິ່ນທີ່ບໍລິຫານໂປຣແກຣມ ຫຼື TARGET Center ຂອງ USDA ໄດ້ທີ່ (202) 720-2600 (ສຽງເວົ້າ ແລະ TTY) ຫຼື ຕິດຕໍ່ USDA ຜ່ານການບໍລິການຖ່າຍທອດສັນຍານຂອງລັດຖະບານກາງ (Federal Relay Service) ທີ່ (800) 877-8339.

ຖ້າຕ້ອງການຍື່ນຄຳຮ້ອງເລື່ອງການເລືອກປະຕິບັດຂອງໂປຣແກຣມ, ຜູ້ຮ້ອງຮຽນຄວນຂຽນແບບຟອມ AD-3027, ແບບຟອມຮ້ອງຮຽນກ່ຽວກັບການເລືອກປະຕິບັດຂອງໂປຣແກຣມ USDA (USDA Program Discrimination Complaint Form) ຊຶ່ງສາມາດຮັບໄດ້ທາງອອນລາຍທີ່: ແບບຟອມຮ້ອງຮຽນກ່ຽວກັບການເລືອກປະຕິບັດຂອງໂປຣແກຣມ USDA (USDA Program Discrimination Complaint Form), ໄດ້ທີ່ຫ້ອງການ USDA ທຸກບ່ອນ, ໂດຍໂທເຂົ້າໄປທີ່ (866) 632-9992 ຫຼື ໂດຍການ ຂຽນຈົດໝາຍສົ່ງຕາມທີ່ຢູ່ຂອງ USDA. ຈົດໝາຍຕ້ອງລະບຸຊື່, ທີ່ຢູ່, ໝາຍເລກໂທລະສັບຂອງຜູ້ຮ້ອງຮຽນ ແລະ ຄຳອະທິບາຍເປັນລາຍລັກອັກສອນກ່ຽວກັບການເລືອກປະຕິບັດທີ່ຖືກກ່າວຫາ ຊຶ່ງມີລາຍລະອຽດພຽງພໍທີ່ຈະແຈ້ງໃຫ້ຜູ້ຊ່ວຍເລຂາທິການ ເພື່ອສິດທິພົນລະເມືອງ (Assistant Secretary for Civil Rights, ASCR) ຊາບກ່ຽວກັບລັກສະນະ ແລະ ວັນທີຂອງການລະເມີດສິດທິພົນລະເມືອງທີ່ຖືກກ່າວຫາ. ແບບຟອມ AD-3027 ສະບັບສົມບູນ ຫຼື ໜັງສືຕ້ອງຍື່ນໃຫ້ USDA ຜ່ານທາງ:

1. **ໄປສະນີ:**
   U.S. Department of Agriculture
   Office of the Assistant Secretary for Civil Rights
   1400 Independence Avenue, SW
   Washington, D.C. 20250-9410; ຫຼື

2. **ແຟັກ:**
   (833) 256-1665 ຫຼື (202) 690-7442; ຫຼື
3. **ອີເມວ:**
   program.intake@usda.gov

ສະຖາບັນນີ້ຜູ້ຈັດຫາໂອກາດທີ່ເທົ່າທຽມກັນ.

**ເອກະສານສະບັບນີ້ໄດ້ຖືກສ້າງຂຶ້ນໂດຍການປະສານງານ ແລະ ໄດ້ຮັບຄວາມຊ່ວຍເຫຼືອຈາກລັດຖະບານກາງ (Federal Assistant) ຈາກໂຄງການຊ່ວຍເຫຼືອ ດ້ານອາຫານສຸກເສີນ (The Emergency Food Assistance Program, TEFAP).**
**ເຈົ້າໜ້າທີ່ໂຄງການອາດຈະກວດສອບສິ່ງທີ່ໄດ້ຮັບການພິສູດດ້ວຍຕົນເອງ ໃນເອກະສານສະບັບນີ້.**
**ທ່ານໄດ້ໃຫ້ເອກະສານສະບັບນີ້ເພື່ອຢືນຢັນຄຳຊີ້ແຈງຂອງການໄດ້ຮັບສິດຂອງທ່ານ. ການຢືນຢັນທີ່ບໍ່ແມ່ນຄວາມຈິງອາດມີຜົນໃຫ້ຕ້ອງ ຈ່າຍເງິນໃຫ້ກັບໜ່ວຍງານຂອງລັດ ສຳລັບມູນຄ່າຂອງອາຫານທີ່ອອກໃຫ້ທ່ານຢ່າງບໍ່ເໝາະສົມ ແລະ ອາດສົ່ງຜົນໃຫ້ມີການດຳເນີນຄະດີທາງແພ່ງ ຫຼື ທາງອາຍາ ພາຍໃຕ້ກົດໝາຍຂອງລັດ ຫຼື ຂອງລັດຖະບານກາງ.**